ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ — ເລກທີ 2228 /ຮັສສ

ນະຄອນຫຼວງວຽງຈັນ, ວັນທີ 1 ກໍລະກົດ 2019

# ຂໍ້ຕົກລົງ

## ວ່າດ້ວຍ ການມອບວຽກ

## ປະກັນສຸຂະພາບໃຫ້ແກ່ຫ້ອງການປະກັນສຸຂະພາບແຫ່ງຊາດ

- ອີງຕາມ ກົດໝາຍວ່າດ້ວຍ ການປະກັນສັງຄົມ(ສະບັບປັບປຸງ)ເລກທີ 54/ສພຊ, ລົງວັນທີ 27 ມິຖຸນາ 2018;
- ອີງຕາມ ກົດໝາຍວ່າດ້ວຍການ ປະກັນສຸຂະພາບ ສະບັບເລກທີ 60/ສພຊ, ລົງວັນທີ 13 ທັນວາ 2018;
- ອີງຕາມ ບົດບັນທຶກກອງປະຊຸມກ່ຽວກັບການຈັດຕັ້ງປະຕິບັດວຽກງານປະກັນສັງຄົມ ແລະ ວຽກງານປະກັນສຸຂະພາບສະບັບລົງວັນທີ 26 ເມສາ 2018.

ລັດຖະມົນຕີ ຕົກລົງ:

ມາດຕາ 1 ອະນຸມັດໃຫ້ຫ້ອງການກອງທຶນປະກັນສັງຄົມແຫ່ງຊາດມອບວຽກປະກັນສຸຂະພາບໃຫ້ຫ້ອງການປະກັນສຸຂະພາບແຫ່ງຊາດກະຊວງສາທາລະນະສຸກເປັນຜູ້ຈັດຕັ້ງປະຕິບັດ ນັບແຕ່ວັນທີ 1 ກໍລະກົດ 2019.

ມາດຕາ 2 ຫ້ອງການກອງທຶນປະກັນສັງຄົມແຫ່ງຊາດສະໜອງເງິນປິ່ນປົວສຸຂະພາບ ໃຫ້ແກ່ຫ້ອງການປະກັນສຸຂະພາບແຫ່ງຊາດ ໂດຍອີງໃສ່ລາຍຮັບເງິນສົມທົບໃນແຕ່ລະເດືອນພາຍຫຼັງມີການສົມທຽບກັບພາກສ່ວນກ່ຽວຂ້ອງແລ້ວໂອນໃຫ້ພາຍໃນ 15 ວັນ ຂອງເດືອນຖັດໄປ.

ມາດຕາ 3 ວິທີການຄິດໄລ່ແມ່ນປະຕິບັດດັ່ງນີ້:

3.1 ເງິນອຸດໜູນປະກັນສຸຂະພາບຂອງ ພາກລັດຖະກອນ ແມ່ນໃຫ້ຫັກເອົາ 1,25% ຂອງອັດຕາເງິນສົມທົບ16,5% ຕາມລາຍຮັບເງິນສົມທົບໃນແຕ່ລະເດືອນ ໂດຍໃຫ້ຄິດໄລ່ ແລະ ສັ່ງຈ່າຍຈາກບັນຊີຂອງຫ້ອງການກອງທຶນປະກັນສັງຄົມແຫ່ງຊາດ ເຂົ້າບັນຊີຂອງ ຫ້ອງການປະກັນສຸຂະພາບແຫ່ງຊາດ ຢູ່ຄັງເງິນແຫ່ງຊາດເປັນລາຍເດືອນ;

3.2 ເງິນອຸດໜູນປະກັນສຸຂະພາບຂອງພາກວິສາຫະກິດ ແລະ ຜູ້ສະໝັກໃຈ ແມ່ນຫັກເອົາ 1,25% ຂອງອັດຕາເງິນສົມທົບ 11,5% ສໍາລັບພາກວິສາຫະກິດ ແລະ 9% ສໍາລັບພາກສະໝັກໃຈຕາມລະບອບເງິນສົມທົບແຕ່ລະເດືອນ ເພື່ອຄິດໄລ່ ແລະ ໂອນຈາກບັນຊີຂອງ ຫ້ອງການກອງທຶນປະກັນສັງຄົມແຫ່ງຊາດ ຢູ່ທະນາຄານທຸລະກິດ ເຂົ້າບັນຊີຂອງຫ້ອງການປະກັນສຸຂະພາບແຫ່ງຊາດ ຢູ່ຄັງເງິນແຫ່ງຊາດ ຫຼື ທະນາຄານ ເປັນລາຍເດືອນ;

3.3 ເງິນອຸດໜູນປະກັນສຸຂະພາບ ສໍາລັບຜູ້ຮັບອຸດໜູນໄລຍະຍາວໃນອັດຕາ 1,25% ຂອງເງິນອຸດໜູນໄລຍະຍາວແຕ່ລະຄົນ ໂດຍຫັກຈາກຜູ້ຮັບອຸດໜູນໄລຍະຍາວເທົ່າກັບ 50% ຂອງອັດຕາສ່ວນເງິນອຸດໜູນດັ່ງກ່າວ ແລະ ກອງທຶນປະກັນສັງຄົມຈະຈ່າຍເພີ່ມໃຫ້ 50% ສໍາລັບກຸ່ມຜູ້ຮັບອຸດໜູນໄລຍະຍາວຕາມກົດໝາຍ ແລະ ຂໍງົບປະມານຊ່ວຍໜູນ 50% ຈາກງົບປະມານລັດສໍາລັບກຸ່ມຮັບອຸດໜູນໄລຍະຍາວຕາມດໍາລັດ 272/ລບ ແລະ 241/ນຍ.

ມາດຕາ 4 ຫ້ອງການກອງທຶນປະກັນສັງຄົມແຫ່ງຊາດ ແລະ ຫ້ອງການປະກັນສຸຂະພາບແຫ່ງຊາດ ກະຊວງສາທາລະນະສຸກ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ພ້ອມກັນປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

ມາດຕາ 5 ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ປອ. ຄໍາແພງ ໄຊສົມແພງ



ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກົມປະກັນສັງຄົມ, ໂທ/ແຟັກ 021 213013.